| | |
|---|---|
| **ຈັດຕັ້ງປະຕິບັດໂດຍ** | ອົງການແຮງງານສາກົນ ແລະ ອັອກສະຟາມ |
| **ຮ່ວມມືກັບ** | ອົງການປະກັນສັງຄົມແຫ່ງຊາດ, ສະຫະພັນກຳມະບານລາວ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| **ສະໜັບສະໜູນໂດຍ** | ສະຫະພາບເອີຣົບ |
| **ໄລຍະເວລາ** | ນັບແຕ່ວັນທີ 15 ພະຈິກ 2021 ຫາ ວັນທີ 14 ສິງຫາ 2024 |



| | |
|---|---|
| **ສິ່ງທ້າທາຍ** | - ເກືອບ 90% ຂອງປະຊາກອນລາວ, ສ່ວນຫຼາຍແມ່ນແຮງງານນອກລະບົບ ແລະ ຄອບຄົວຂອງເຂົາເຈົ້າບໍ່ມີປະກັນສັງຄົມ<br>- ຜູ້ຜະລິດ ແລະ ຜູ້ທີ່ກ່ຽວຂ້ອງໃນລະບົບຕ່ອງໂສ້ການຜະລິດກາເຟມີຄວາມຮູ້ຈຳກັດກ່ຽວກັບຄວາມປອດໄພ ແລະ ອັນຕະລາຍຂອງສຸຂະພາບແຮງງານ ແລະ ຄວາມສ່ຽງຕ່າງໆ<br>- ຂາດຂໍ້ມູນທີ່ກ່ຽວຂ້ອງກັບອຸບັດຕິເຫດແຮງງານ ແລະ ການເຈັບປ່ວຍຈາກການເຮັດວຽກໃນຂະແໜງອຸດສາຫະກຳກາເຟ ແລະ ພາກກະສິກຳຂອງ ສປປ ລາວ |



## ສາມາດຕິດຕໍ່ກັບພວກເຮົາ:


ນາງ ເລີມລີນ ເດ
ຜູ້ຈັດການໂຄງການ
ໂທ/ແຟັກ: +856 20 454 415
ມືຖື: + 856 20 55903483
ອີເມວ: del@ilo.org
ເວັບໄຊທ໌: www.ilo.org

ນາງ ນຸດທອງ ອາລຸນທອງ
ຜູ້ປະສານງານໂຄງການ
ໂທ/ແຟັກ: +856 21 454 415
ມືຖື: +856 20 2241 3183
ອີເມວ: alounthong@ilo.org
ເວັບໄຊທ໌: www.ilo.org




# SOLAR

## ໂຄງການ ສ້າງຄວາມກ້າວໜ້າໃຫ້ແກ່ລະບົບປົກປ້ອງສັງຄົມ ແລະ ສິດທິດ້ານແຮງງານ ສຳລັບຊາວກະສິກອນໃນສວນກາເຟ ແລະ ຊາ

OXFAM
International Labour Organization

| ອົງປະກອບຫຼັກ | |
|---|---|
| **ເປົ້າໝາຍລວມ** | ສົ່ງເສີມສິດທິດ້ານແຮງງານ ແລະ ປັບປຸງການເຂົ້າເຖິງລະບົບປະກັນສັງຄົມ, ຄວາມປອດໄພ ແລະ ສຸຂະພາບແຮງງານຂອງແຮງງານໃນຂະແໜງກາເຟ ແລະ ຊາ ໃນ ສປປ ລາວ |
| **ພື້ນທີ່ເປົ້າໝາຍ** | ພູພຽງບໍລະເວນ: ເມືອງ ປາກຊ່ອງ ແຂວງຈຳປາສັກ, ເມືອງ ທ່າແຕງ ແຂວງເຊກອງ, ເມືອງ ເລົ່າງາມ ແຂວງສາລະວັນ |






## ຜູ້ໄດ້ຮັບຜົນປະໂຫຍດຮ່ວມ

ແຮງງານໃນຂະແໜງກາເຟ ແລະ ຊາ ຈຳນວນ 88,000 ຄົນ ທົ່ວປະເທດລາວ, ລວມທັງ ແຮງງານຈຳນວນ 24,000 ຄົນ ໃນພູພຽງບໍລະເວນ

## ກຸ່ມເປົ້າຫມາຍຫຼັກ

ແຮງງານໃນຂະແໜງກາເຟ ແລະ ຊາ ຈຳນວນ 400 ຄົນ



## ບູລິມະສິດ

### ບູລິມະສິດ 1 - ການປົກປ້ອງສັງຄົມ

- ເພີ່ມຄວາມອາດສາມາດຂອງແຮງງານນອກລະບົບເພື່ອຊ່ວຍໃນການບັນລຸສິ່ງທີ່ເຂົາເຈົ້າຕ້ອງການ
- ປັບປຸງການປະຕິບັດສິດປົກປ້ອງສັງຄົມ ແລະ ສິດແຮງງານຢູ່ຂັ້ນແຂວງ ແລະ ຂັ້ນເມືອງ
- ໃຫ້ຄຳແນະນຳໃນການປ່ຽນແປງນະໂຍບາຍ ແລະ ການຈັດຕັ້ງໃນໄລຍະຍາວ

### ບູລິມະສິດ 2 - ຄວາມປອດໄພ ແລະ ສຸຂະພາບແຮງງານ

- ສືບຕໍ່ ແລະ ເສີມຂະຫຍາຍຜົນໄດ້ຮັບຂອງໂຄງການ Vision Zero Fund (2018-2020) ຢູ່ແຂວງຈຳປາສັກ.
- ດຳເນີນການຮ່ວມມືທີ່ມີລັກສະນະຄ້າຍຄືກັນກັບແຂວງຈຳປາສັກ ຢູ່ແຂວງເຊກອງ ແລະ ແຂວງສາລະວັນ.
- ສ້າງກຸ່ມຄູຝຶກ / ຜູ້ສົ່ງເສີມການປົກປ້ອງສັງຄົມ ແລະ ຄວາມປອດໄພ ແລະ ສຸຂະພາບແຮງງານ

### ບູລິມະສິດທີ 3 - ຄວາມສະເໝີພາບລະຫວ່າງຍິງ-ຊາຍ

- ເພີ່ມຄວາມເຂົ້າໃຈໃຫ້ແຮງງານກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການລ່ວງລະເມີດທາງເພດຢູ່ບ່ອນເຮັດວຽກ
- ຮັບຟັງບັນຫາ, ປັບປຸງດ້ານການຈັດຕັ້ງ ແລະ ການເປັນຜູ້ນຳຂອງແມ່ຍິງໃນບ່ອນເຮັດວຽກ
- ປູກຈິດສຳນຶກໃນຊຸມຊົນກ່ຽວກັບມາດຕະຖານວັດທະນະທຳ-ສັງຄົມ ແລະ ການໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ

### ບູລິມະສິດທີ 4 – ການຮ່ວມມືຫຼາຍຝ່າຍ

- ຊຸກຍູ້ໃຫ້ມີການປຶກສາຫາລື ແລະ ການຕໍ່ລອງແບບລວມໝູ່
- ຮັດແໜ້ນສາຍພົວພັນກັບຄູ່ຮ່ວມງານໂດຍການຮ່ວມມືກັບລັດຖະບານ, ຄູ່ຮ່ວມງານສັງຄົມ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສະຫະກອນ
- ສົ່ງເສີມການຮ່ວມມືກັບຄູ່ຮ່ວມງານໃໝ່ສຳລັບແຮງງານນອກລະບົບ, ຊາວກະສິກອນ, ແລະ ແຮງງານທີ່ເປັນເພດຍິງ

